ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສູນກາງແນວລາວສ້າງຊາດ

ຄະນະປະຈຳ

ເລກທີ 008/ຄປຈ

ນະຄອນຫຼວງວຽງຈັນ, ວັນທີ 21 ກຸມພາ 2020

# ຄຳແນະນຳ

ເຖິງ: ປະທານແນວລາວສ້າງຊາດນະຄອນຫຼວງ ແລະບັນດາແຂວງທົ່ວປະເທດ ທີ່ນັບຖື.

**ເລື່ອງ: ການແກ້ໄຂບັນຫາຕ່າງໆ ຂອງເຂດແນວລາວສ້າງຊາດ.**

- ອີງຕາມ ກົດໝາຍ ວ່າດ້ວຍແນວລາວສ້າງຊາດ ສະບັບເລກທີ 49/ສພຊ, ໝວດທີ 1, ມາດຕາ 9;
- ອີງຕາມ ບົດບັນທຶກກອງປະຊຸມຄະນະປະຈຳ ສນຊ ເດືອນ ຄັ້ງວັນທີ 27-28 ມັງກອນ 2020.

ເພື່ອເປັນການເຜີຍແຜ່ ແລະ ຈັດຕັ້ງຜັນຂະຫຍາຍພາລະບົດບາດ, ສິດ ແລະ ໜ້າທີ່ຂອງແນວລາວສ້າງຊາດແຕ່ລະຂັ້ນ ໃຫ້ເລິກເຊິ່ງ ແລະ ກວ້າງຂວາງ ແນໃສ່ເພີ່ມທະວີໂຄສະນາ, ປຸກລະດົມ, ສຶກສາອົບຮົມ ໃຫ້ມີເນື້ອໃນຫຼາຍຮູບຫຼາຍສີ ເວົ້າລວມ, ເວົ້າສະເພາະແມ່ນແນວລາວສ້າງຊາດຂັ້ນທ້ອງຖິ່ນ ໃຫ້ຮັບຮູ້ ແລະ ເຂົ້າໃຈແຈ້ງກວ່າເກົ່າຕໍ່ພາລະບົດບາດຂອງຕົນ ໃນການແກ້ໄຂບັນຫາຕ່າງໆ, ພ້ອມທັງເປັນການປຸກລະດົມປະຊາຊົນບັນດາເຜົ່າ, ຊັ້ນຄົນ, ສາສະໜາ, ເພດ, ໄວ ເຂົ້າຮ່ວມຂະບວນການຕ່າງໆ ທີ່ພັກ-ລັດ ວາງອອກ ດ້ວຍຄວາມຟົດຟື້ນຫ້າວຫັນ, ສ້າງຜົນງານ, ສ້າງບາດກ້າວບຸກທະລຸ ເຮັດໃຫ້ວຽກງານແນວລາວສ້າງຊາດມີທ່ວງທ່າໃໝ່.

## ຄະນະປະຈຳສູນກາງແນວລາວສ້າງຊາດ ອອກຄຳແນະນຳ:

## I. ຈຸດປະສົງ

1. ເພື່ອເຮັດໃຫ້ແນວລາວສ້າງຊາດແຕ່ລະຂັ້ນໄດ້ເຊື່ອມຊຶມ, ກຳແໜ້ນກ່ຽວກັບພາລະບົດບາດ, ສິດ ແລະໜ້າທີ່ຂອງຕົນ ໃຫ້ແຈ້ງຂຶ້ນຕື່ມ ໂດຍສະເພາະແມ່ນການແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນ ແລະຕິດພັນກັບວຽກງານແນວໂຮມ;

2. ເພື່ອເປັນບ່ອນອີງໃຫ້ແກ່ແນວລາວສ້າງຊາດແຕ່ລະຂັ້ນໃນການຈັດຕັ້ງປະຕິບັດວຽກງານວິຊາສະເພາະ;

3. ເພື່ອສ້າງຄວາມເຂັ້ມແຂງ, ຄວາມຮັບຜິດຊອບ, ຄວາມເປັນເຈົ້າການ ແລະຍົກສູງພາລະບົດບາດ ໃຫ້ແກ່ແນວລາວສ້າງຊາດຂັ້ນທ້ອງຖິ່ນໃນການແກ້ໄຂບັນຫາຕ່າງໆ.

## II. ເນື້ອໃນ

1. ບັນຫາຕ່າງໆ ທີ່ພົວພັນເຖິງ ແນວທາງ, ນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ກົດໝາຍ ວ່າດ້ວຍແນວລາວສ້າງຊາດ, ພາລະບົດບາດຂອງແນວລາວສ້າງຊາດ; ບັນຫາທີ່ພົວພັນເຖິງຫຼາຍພາກສ່ວນຢູ່ຂັ້ນສູນກາງ, ບັນຫາທີ່ພົວພັນຫຼາຍແຂວງ ແລະບັນຫາທີ່ເກີດຈາກການປະຕິບັດໜ້າທີ່ຂອງພະນັກງານທີ່ສັງກັດຢູ່ຂັ້ນສູນກາງ ແມ່ນມອບໃຫ້ຄະນະປະຈຳສູນກາງແນວລາວສ້າງຊາດ ລົງໄປສົມທົບກັບພາກສ່ວນທີ່ກ່ຽວຂ້ອງແກ້ໄຂໂດຍກົງ.

2. ບັນຫາຕ່າງໆ ທີ່ພົວພັນເຖິງປະຊາຊົນບັນດາເຜົ່າ, ວັດທະນະທຳ, ສາສະໜາ, ຮີດຄອງປະເພນີ, ການດຳລົງຊີວິດ, ການຜະລິດຕ່າງໆ ແລະລະບຽບກົດໝາຍ ໃນຂອບເຂດທ້ອງຖິ່ນໃດໜຶ່ງ, ການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງພະນັກງານຂັ້ນທ້ອງຖິ່ນ ແລະ ບັນຫາທີ່ພົວພັນສະເພາະທ້ອງຖິ່ນ ແມ່ນມອບໃຫ້ແນວລາວສ້າງຊາດຂັ້ນທ້ອງຖິ່ນ ຮັບຜິດຊອບແກ້ໄຂຕາມຂັ້ນຕອນ ໂດຍມີການສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

3. ບັນຫາໃດ ທີ່ໄດ້ຜ່ານການແກ້ໄຂຢູ່ຂັ້ນທ້ອງຖິ່ນຕາມຂັ້ນຕອນແຕ່ລຸ່ມຂຶ້ນເທິງແລ້ວ ແຕ່ບໍ່ສາມາດແກ້ໄຂໄດ້ຈຶ່ງສະເໜີໃຫ້ຄະນະປະຈຳສູນກາງແນວລາວສ້າງຊາດ ລົງໄປຊ່ວຍແກ້ໄຂ.

4. ສຳລັບງານບຸນປະເພນີປະຈຳປີຂອງປະຊາຊົນບັນດາເຜົ່າທີ່ຈັດໃນລະດັບຂັ້ນແຂວງ ແມ່ນຄະນະປະຈຳຈະຄົ້ນຄວ້າ ແລະເຂົ້າຮ່ວມຕາມຄວາມເໝາະສົມ, ງານບຸນປະເພນີທີ່ຈັດໃນລະດັບຂັ້ນເມືອງແມ່ນມອບໃຫ້ແນວລາວສ້າງຊາດແຂວງເຂົ້າຮ່ວມ ແລະ ງານບຸນລະດັບບ້ານແມ່ນມອບໃຫ້ແນວລາວສ້າງຊາດເມືອງເຂົ້າຮ່ວມ.

## III. ວິທີຈັດຕັ້ງປະຕິບັດ

1. ມອບໃຫ້ແນວລາວສ້າງຊາດແຕ່ລະຂັ້ນ ປະສານສົມທົບກັບຄະນະພັກ, ອົງການປົກຄອງ ແລະ ອົງການພາຄີ ເພື່ອຈັດຕັ້ງເຊື່ອມຊຶມ ແລະຜັນຂະຫຍາຍຄຳແນະນຳສະບັບນີ້ໃຫ້ທົ່ວເຖິງ ແລະ ເປັນຮູບປະທຳ;

2. ແນວລາວສ້າງຊາດແຕ່ລະຂັ້ນ ຕ້ອງໄດ້ເອົາໃຈໃສ່ຍາດແຍ່ງການຊີ້ນຳ-ນຳພາຈາກຄະນະພັກຂັ້ນຂອງຕົນ ແລະຫັນເອົາເນື້ອໃນດັ່ງກ່າວເປັນອັນລະອຽດ ແລະ ຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ, ພ້ອມທັງເອົາໃຈໃສ່ຕິດຕາມກວດກາ ແລະ ຊຸກຍູ້-ຊ່ວຍເຫຼືອໃນການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ຢ່າງເປັນເຈົ້າການ.

3. ພາຍຫຼັງການຈັດຕັ້ງປະຕິບັດ ຖ້າມີບັນຫາຫຍຸ້ງຍາກໃຫ້ລາຍງານຕໍ່ຄະນະປະຈຳສູນກາງແນວລາວສ້າງຊາດ ເພື່ອຊາບ ແລະມີທິດຊີ້ນຳ.

ດັ່ງນັ້ນ, ຈຶ່ງມີຄຳແນະນຳສະບັບນີ້ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

**ຄະນະປະຈຳສູນກາງແນວລາວສ້າງຊາດ**

**ປະທານ** (ເຊັນແທນ)

ຈັນທະວົງ ແສນອາມາດມົນຕີ